# ໜັງສືລາຍງານທີ່ເປັນລາຍລັກອັກ ສອນ ສຳລັບບັນດານັກຮຽນທີ່ ພວມຮຽນພາສາອັງກິດເປັນພາສາ ເພີ້ມຫຼືເປັນພາສາປາກທ້ອງຖິ່ນ

## ຂໍ້ມູນສຳລັບພໍ່ແມ່ ແລະ ຜູ້ດູແລ

ພໍ່ແມ່ ແລະ ຜູ້ດູແລ ທີ່ຮັກແພງ

ໃນແຕ່ລະປີທ່ານໄດ້ຮັບລາຍງານ ແບບເປັນລາຍລັກອັກສອນສອງອັນ ຈາກທາງໂຮງຮຽນຂອງລູກທ່ານ. ໜັງສືລາຍງານເຫຼົ່ານີ້ຈະຊ່ວຍທ່ານ ໃຫ້ເຂົ້າໃຈວ່າລູກທ່ານມີຄວາມກ້າວ ໜ້າຢ່າງໃດ ແລະ ທາງໂຮງຮຽນຊ່ວຍ ເຫຼືອການຮຽນຂອງລູກທ່ານຢ່າງໃດ. ໜັງສືລາຍງານຈະສະແດງໃຫ້ເຫັນ ຄວາມກ້າວໜ້າໃນທຸກໆວິຊາຂອງ ລູກທ່ານ.

### ໜັງສືລາຍງານສຳລັບບັນດານັກຮຽນ ທີ່ມີພາສາອັງກິດເປັນພາສາເພີ້ມ ຫຼື ເປັນພາສາປາກທ້ອງຖິ່ນ (English as an additional language or dialect (EAL/D))

ຖ້າລູກທ່ານພວມຮຽນພາສາອັງ ກິດເປັນພາສາເພີ້ມຫຼືເປັນພາສາປາກທ້ອງຖິ່ນ, ໜັງສືລາຍງານຈະສະແດງ ໃຫ້ເຫັນເຖິງຄວາມກ້າວໜ້າຂອງລູກ ທ່ານໃນການຮຽນພາສາອັງກິດ ແລະ ລະດັບຄວາມຊຳນານໃນພາສາອັງ ກິດຂອງພວກເຂົາ. ລະດັບຕ່າງໆມີຄື ລະດັບເລີ້ມຕົ້ນ, ລະ ດັບພື້ນຂຶ້ນມາ, ລະດັບພັທນາ ຫຼື ເຮັດໃຫ້ໝັ້ນຄົງ. ກະຣຸນາເບິ່ງໜ້າຕໍ່ໄປສຳລັບຄຳອະທິ ບາຍຂອງລະດັບຕ່າງໆເຫຼົ່ານີ້.

### ໜັງສືລາຍງານສຳລັບບັນດານັກຮຽນ ໃນໂຄງການ EAL/D

ຖ້າລູກທ່ານຢູ່ໃນໂຄງການ EAL/D ພວກເຂົາຈະໄດ້ຮັບໜັງສືລາຍງານ ຕື່ມອີກອັນນຶ່ງ ຈາກນາຍຄູຂອງ EAL/D ຊຶ່ງຈະກອມ ເອົາຂໍ້ມູນກ່ຽວກັບຄວາມກ້າວໜ້າໃນ ການຮຽນພາສາອັງກິດຂອງພວກເຂົາ.

### ໜັງສືລາຍງານສຳລັບບັນດານັກຮຽນ ທີ່ມາໃໝ່ຂອງໂຄງການ EAL/D

ຖ້າລູກຂອງທ່ານຢູ່ໃນໂຄງການ EAL/D ແລະເຄີຍໄດ້ຢູ່ໃນໂຮງຮຽນ ຂອງອອສເຕຣເລັຍມາໄດ້ສີ່ເທີມຫຼື ໜ້ອຍກວ່າ, ໜັງສືລາຍງານຂອງລູກທ່ານຈະກອມ ເອົາ ຂໍ້ມູນກ່ຽວກັບຄວາມກ້າວໜ້າ ຂອງພວກເຂົາໃນດ້ານການຮຽນພາສາ ອັງກິດພ້ອມທັງຄວາມກ້າວໜ້າໃນດ້ານ ວິຊາອື່ນໆທີ່ພວກເຂົາພວມຮຽນຢູ່ ໂດຍ ເປັນ ແບບໃຫ້ຄວາມຄິດຄວາມເຫັນ ອີກດ້ວຍ ແທນທີ່ຈະໃຫ້ເປັນເກຣດ.

### ໜັງສືລາຍງານສຳລັບບັນດານັກຮຽນ ມາໃໝ່ໃນໂຄງການ EAL/D ທີ່ຮຽນຢູ່ ໃນສູນຮຽນພາສາອັງກິດເພີ້ມ (Intensive English Centres) ຫຼື ຢູ່ໃນໂຮງຮຽນມັທຍົມ ທີ່ຮຽນພາສາ ອັງກິດ ແບບລະອຽດເລິກເຊິ່ງ (Intensive English High School)

ຖ້າລູກທ່ານພວມຮຽນຢູ່ໃນສູນຮຽນພາສາອັງກິດເພີ້ມ ຫຼື ຢູ່ໃນໂຮງຮຽນ ມັທຍົມທີ່ຮຽນພາສາອັງກິດແບບ ລະອຽດເລິກເຊິ່ງ ທ່ານຈະໄດ້ຮັບໜັງສື ລາຍງານກ່ຽວກັບຄວາມກ້າວໜ້າໃນ ການຮຽນພາສາອັງກິດຂອງພວກເຂົາ. ເພີ້ມຕື່ມຈາກນີ້ແລ້ວ ໜັງສືລາຍງານ ຍັງຈະສະແດງໃຫ້ເຫັນຄວາມກ້າວໜ້າ ໃນວິຊາອື່ນໆໃນການກະກຽມສຳລັບ ເຂົ້າໂຮງຮຽນມັທຍົມອີກດ້ວຍ.

| ລະດັບຕ່າງໆຂອງຄວາມຊໍານານພາ ສາອັງກິດ | |
|---|---|
| **ລະດັບເລີ້ມຕົ້ນ** | ບັນດານັກຮຽນທີ່ຢູ່ໃນລະດັບເລີ້ມຕົ້ນ ແມ່ນພວມເລີ້ມຮຽນພາສາອັງກິດ. ພວກເຂົາສາມາດເວົ້າໄດ້ນຶ່ງ ຫຼື ສອງ ພາສານອກຈາກພາສາອັງກິດ ແລະ ອາດຈະມີລະດັບເໝາະສົມຕາມອາຍຸ ໃນການຂຽນພາສາທີ່ເປັນພາສາທໍາອິດຂອງພວກເຂົາ ບັນດານັກຮຽນເຫຼົ່ານີ້ເລີ້ມພົວພັນກັບ ວຽກຮຽນພາສາແບບງ່າຍໆຂອງ ຫຼັກສູດການສຶກສາ. |
| **ລະດັບພົ້ນຂຶ້ນມາ** | ບັນດານັກຮຽນທີ່ຢູ່ໃນລະດັບພົ້ນຂຶ້ນ ມານີ້ມີຄວາມຮູ້ໃນພາສາອັງກິດເຕີບ ໂຕຂຶ້ນ. ບັນດານັກຮຽນເຫຼົ່ານີ້ສາມາດເວົ້າໄດ້ ນຶ່ງພາສາຫຼືຫຼາຍກວ່າຮວມທັງພາສາອັງກິດແບບພື້ນຖານ ບັນດານັກຮຽນເຫຼົ່ານີ້ສາມາດເຂົ້າຮ່ວມ ກິຈກັມໃນຫ້ອງຮຽນແລະພົວພັນໃນ ການຮຽນໃນເວລາທີ່ມີການສອນພາສາອັນເໝາະສົມ ແລະ ມີເວລາເພີ້ມ ໃຫ້ເພື່ອເຮັດ ບັນດາກິຈກັມຂອງຫ້ອງຮຽນໃຫ້ສໍາເລັດ. |
| **ລະດັບພັທນາ** | ບັນດານັກຮຽນທີ່ຢູ່ລະດັບພັທນານີ້ ສາ ມາດເວົ້າໄດ້ນຶ່ງພາສາຫຼືຫຼາຍກວ່າ, ຮວມເຖິງພາສາອັງກິດທີ່ໃຊ້ວຽກໄດ້, ແລະ ມີຄວາມຮູ້ໃນຂັ້ນພັທນາໃນດ້ານການຂຽນພາສາອັງກິດ. ບັນດານັກຮຽນເຫຼົ່ານີ້ເປັນຜູ້ເຂົ້າຮ່ວມ ກິຈກັມຫ້ອງຮຽນແລະຂອງໂຮງຮຽນ ທີ່ຫ້າວຫັນ,ແລະຍັງສາມາດພົວພັນໃນ ໜ້າວຽກທີ່ເພີ້ມຄວາມສໍາເຣັດອີກດ້ວຍ. ພາສາທໍາອິດຂອງພວກເຂົາສືບຕໍ່ ເປັນການອູ້ມຊູທີ່ມີຄ່າໃນຂະນະທີ່ ພວກເຂົາພັທນາການຄວບຄຸມໄວຍະ ກອນຂອງພາສາອັງກິດ ແລະ ກໍ່ສ້າງຄໍາສັບ ຂອງພວກເຂົາ. |
| **ລະດັບເຮັດໃຫ້ໝັ້ນຄົງ** | ບັນດານັກຮຽນທີ່ຢູ່ໃນລະດັບເຮັດໃຫ້ ໝັ້ນຄົງນີ້ສາມາດເວົ້ານຶ່ງພາສາຫຼືຫຼາຍກວ່າ, ຮວມທັງພາສາອັງກິດ ແລະ ມີ ຄວາມຮູ້ດ້ານຂຽນພາສາອັງກິດດີພໍ ຄວນ. ບັນດານັກຮຽນເຫຼົ່ານີ້ເປັນຜູ້ເຂົ້າຮ່ວມ ໃນກິຈກັມຂອງຫ້ອງຮຽນແລະຂອງໂຮງຮຽນແບບເປັນໂຕຂອງໂຕເອງ ແລະ ມີຄວາມສາມາດນໍາໃຊ້ພາສາອັງກິດເພື່ອພົວພັນໃນການຮຽນດ້ວຍ ຄວາມສໍາເຣັດທົ່ວໄປ. ພວກເຂົາເຂົ້າໃຈແລະຜລິດບົດຄໍາເວົ້າແລະບົດຂຽນສໍາລັບຈຸດປະສົງສະເພາະອັນກວ້າງຂວາງແຕ່ວ່າກໍຍັງ ຕ້ອງແນໃສ່ການສອນພາສາອັງກິດ ແລະຍຸດທະສາດການຊ່ວຍເຫຼືອນັກ ຮຽນຂອງໂຄງການ EAL/D ໃນເມື່ອພາສາການສຶກສາຂອງວິຊາເພີ້ມຂຶ້ນ. |

## ບໍຣິການ ນາຍພາສາທາງໂທຣະສັບ

ຖ້າທ່ານຕ້ອງການຂໍ້ມູນເພີ້ມຕື່ມ ກະຣຸ ນາຕິດຕໍ່ຫາທາງໂຮງຮຽນ. ຖ້າທ່ານຕ້ອງການນາຍພາສາເພື່ອຊ່ວຍທ່ານໃນການຕິດຕໍ່ທາງໂຮງຮຽນ ກະຣຸນາໂທຫາ ບໍຣິການນາຍພາສາ ທາງໂທຣະສັບ (TIS) ຕາມໝາຍເລກ 131 450 ແລ້ວຂໍເອົານາຍພາສາລາວ ນາຍພາສາຈະໂທຫາໂຮງຮຽນແລະ ຈະຢູ່ກັບສາຍເພື່ອຊ່ວຍທ່ານໃນການສົນທະນາ. ທ່ານບໍ່ຕ້ອງເສັຍຄ່າບໍຣິການນີ້.